**ບົດລາຍງານ ຄວາມຄືບໜ້າຂອງການປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ພາຍໃຕ້ກົນໄກກອງປະຊຸມທຸລະກິດລາວ ໃນໄລຍະໜຶ່ງປີຜ່ານມາ**

**ໂດຍ ກອງເລຂາກອງປະຊຸມທຸລະກິດລາວ**

**ຕາງໜ້າລາຍງານ ໂດຍ ທ່ານ ນາງ ວາລີ ເວດສະພົງ, ຮອງ ປະທານ ສຄອ ແຫ່ງຊາດລາວ ຕໍ່ກອງປະຊຸມທຸລະກິດລາວ ຄັ້ງທີ 13**

**ວັນທີ 28 ກໍລະກົດ 2021, ນະຄອນຫຼວງວຽງຈັນ.**

- ຮຽນ ພະນະທ່ານ ພັນຄໍາ ວິພາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;
- ຮຽນ ບັນດາທ່ານລັດຖະມົນຕີ, ທ່ານຮອງລັດຖະມົນຕີ ທີ່ນັບຖື;
- ຮຽນ ທ່ານ ທູຕານຸທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ; ຜູ້ຕາງໜ້າຈາກຂະແໜງການພາກລັດ ແລະ ພາກທຸລະກິດ ທັງຢູ່ໃນ ສປປ ລາວ ແລະ ຢູ່ຕ່າງປະເທດ ທີ່ເຂົ້າຮ່ວມຜ່ານທາງ ລະບົບກອງປະຊຸມທາງໄກ;

ຂ້າພະເຈົ້າ, ຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ຕາງໜ້າໃຫ້ກອງເລຂາກອງປະຊຸມທຸລະກິດລາວ ຂຶ້ນລາຍງານຄວາມຄືບໜ້າຂອງຂະບວນການປຶກສາຫາລື ລະຫວ່າງ ພາກລັດ ແລະ ທຸລະກິດ ພາຍໃຕ້ກົນໄກກອງປະຊຸມທຸລະກິດລາວ ໃນມື້ນີ້. ກອງປະຊຸມທຸລະກິດລາວ ຫຼື Lao Business Forum, ເປັນກອງປະຊຸມທີ່ຖືກຈັດຂຶ້ນໃນທຸກໆປີ, ເຊິ່ງຂະບວນການປຶກສາຫາລື ເພື່ອກະກຽມກອງປະຊຸມທຸລະກິດລາວ ແມ່ນຂະບວນການທີ່ຕໍ່ເນື່ອງຕະຫຼອດປີ ໂດຍ ມີ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ເປັນກອງເລຂາ ແລະ ມີ ກະຊວງ ອຸດສາຫະກໍາ ແລະ ການຄ້າ ເປັນຈຸດປະສານງານຂອງພາກລັດ. ປະຈຸບັນ ຂະບວນການປຶກສາຫາລື ແມ່ນໄດ້ຮັບການສະໜັບສະໜູນທາງດ້ານວິຊາການ ແລະ ທຶນຮອນ ຈາກ ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ ຫຼື Lao Competitiveness and Trade Project. ໃນຂະບວນການປຶກສາຫາລືຂອງກອງປະຊຸມທຸລະກິດລາວ ແມ່ນ ພາກທຸລະກິດ ໄດ້ຍົກບັນຫາ ແລະ ມີການຄັດຈ້ອນ ຜ່ານໜ່ວຍງານປຶກສາຫາລືພາກເອກະຊົນຂະແໜງການຂອງຕົນ ເພື່ອຍົກຂຶ້ນມາປຶກສາຫາລືກັບພາກລັດຖະບານໃນກອງປະຊຸມ ລະດັບວິຊາການ ແລະ ລາຍງານໃນກອງປະຊຸມລະດັບຊາດ ເຊິ່ງກໍ່ຄືກອງປະຊຸມທຸລະກິດລາວ ໃນມື້ນີ້.

**ທ່ານ ນາຍົກລັດຖະມົນຕີ ແລະ ບັນດາແຂກຜູ້ມີກຽດທີ່ນັບຖື,**

ກ່ອນອື່ນໝົດ ຂ້າພະເຈົ້າ ກໍ່ຂໍສະແດງຄວາມຊົມເຊີຍເປັນຢ່າງສູງ ທີ່ລັດຖະບານໄດ້ໃຫ້ຄວາມສໍາຄັນ ແລະ ເອົາໃຈໃສ່ແກ້ໄຂບັນຫາ ຊ່ວຍພາກທຸລະກິດ ໃນໄລຍະຜ່ານມາ, ເຮັດໃຫ້ຫຼາຍບັນຫາທີ່ພາກທຸລະກິດໄດ້ສະເໜີ ໄດ້ຮັບການແກ້ໄຂ. ກ່ອນທີ່ຈະມາຮອດມື້ນີ້ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ໄດ້ມີຂະບວນການປຶກສາຫາລື ຮ່ວມກັນກັບຫຼາຍຂະແໜງການຂອງພາກລັດ ໃນລະດັບວິຊາການ, ເຊິ່ງໄດ້ຮັບກຽດເປັນປະທານຮ່ວມໂດຍ ຮອງ ລັດຖະມົນຕີ, ຫຼື ຫົວໜ້າກົມ ຂອງຂະແໜງການທີ່ກ່ຽວຂ້ອງ ຮ່ວມກັບຮອງປະທານ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ, ເຊິ່ງຂ້າພະເຈົ້າເອງ ກໍ່ໄດ້ມີໂອກາດເປັນປະທານຮ່ວມໃນຫຼາຍກອງປະຊຸມ.

ມາຮອດນີ້ ຂ້າພະເຈົ້າຂໍລາຍງານກ່ຽວກັບ ການກະກຽມກອງປະຊຸມທຸລະກິດລາວ ຄັ້ງທີ 13 ທີ່ພວກເຮົາໄດ້ເລີ່ມດໍາເນີນແຕ່ຕົ້ນປີ 2020 ມາຮອດປະຈຸບັນ ຄື ດັ່ງນີ້:

- ພາຍຫຼັງ LBF 12 ໃນ ເດືອນ ພະຈິກ 2019, ຫ້ອງວ່າການ ສໍານັກງານນາຍົກລັດຖະມົນຕີ ໄດ້ອອກແຈ້ງການ ເລກທີ 47/ຫສນຍ, ລົງວັນທີ 14 ມັງກອນ 2020 ເຖິງບັນດາກະຊວງທີ່ກ່ຽວຂ້ອງ ເລື່ອງທິດຊີ້ນໍາກ່ຽວກັບການແກ້ໄຂບັນຫາທີ່ຕັ້ງຂຶ້ນໃນກອງປະຊຸມທຸລະກິດລາວ ຄັ້ງທີ 12, ເຊິ່ງພາຍຫຼັງໄດ້ຮັບແຈ້ງການ ດັ່ງກ່າວ ກອງເລຂາພວກເຮົາ ໄດ້ ຕິດຕາມ ແລະ ຊຸກຍູ້ການແກ້ໄຂບັນຫາຕ່າງໆ ຕາມແຈ້ງການຜ່ານການສົ່ງໜັງສືສະເໜີຕິດຕາມຄວາມຄືບໜ້າ ແລະ ຜ່ານກອງປະຊຸມລະດັບວິຊາການລະຫວ່າງພາກທຸລະກິດ ແລະ ບັນດາກົມວິຊາການທີ່ກ່ຽວຂ້ອງ;
- ໄປພ້ອມພຽງກັບການຕິດຕາມຄວາມຄືບໜ້າການແກ້ໄຂບັນຫາ, ພວກເຮົາກໍ່ຈັດກອງປະຊຸມປຶກສາຫາລືພາກທຸລະກິດ ແລະ ປະສານງານກັບບັນດາທຸລະກິດໃນຂະແໜງການຕ່າງໆ ທັງທຸລະກິດພາຍໃນ ແລະ ທຸລະກິດຂອງຕ່າງປະເທດ ໃນລະຫວ່າງ ເດືອນ ມັງກອນ - ຕຸລາ ປີ 2020, ເພື່ອເກັບກໍາ ແລະ ຄັດຈ້ອນບັນຫາທີ່ພາກທຸລະກິດເຫັນວ່າເປັນບູລິມະສິດ, ເຊິ່ງປະຈຸບັນ ມີທັງໝົດ 40 ບັນຫາບູລິມະສິດ ລວມເອົາທັງບັນຫາທີ່ຍັງຄົງຄ້າງຈາກກອງປະຊຸມທຸລະກິດລາວ ຄັ້ງຜ່ານມາ;
- ຫຼັງຈາກນັ້ນ ພວກເຮົາກໍ່ໄດ້ຈັດກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ໃນລະດັບວິຊາການ ລະຫວ່າງ ເດືອນ ກໍລະກົດ ປີ 2020 ຫາ ເດືອນ ກຸມພາ ປີ 2021 ຕໍ່ກັບຫຼາຍບັນຫາບູລິມະສິດ, ແຕ່ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດ ໂຄວິດ-19 ເຊິ່ງເປັນສິ່ງທ້າທາຍໃຫ້ກັບຂະບວນການປຶກສາຫາລືຂອງພວກເຮົາ ຈຶ່ງເຮັດໃຫ້ບາງບັນຫາບູລິມະສິດ ຍັງບໍ່ທັນໄດ້ຖືກຍົກຂຶ້ນມາປຶກສາຫາລືໃນລະດັບ

ວິຊາການເທື່ອ ເຊິ່ງ ພວກເຮົາ ຈຶ່ງຄາດວ່າຈະຕ້ອງໄດ້ມີການສືບຕໍ່ຂະບວນການປຶກສາຫາລື ໂດຍປັບປ່ຽນມາເປັນລັກສະນະອອນລາຍຄືດັ່ງກອງປະຊຸມໃນມື້ນີ້ແທນ.

- ພ້ອມດຽວກັນນີ້ ພວກເຮົາກໍ່ໄດ້ເຮັດວຽກຮ່ວມກັບ ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າກົນໄກວິທີການປະສານງານວຽກງານກອງປະຊຸມທຸລະກິດລາວ (LBF) ແລະ ວຽກງານອໍານວຍຄວາມສະດວກທາງດ້ານການຄ້າ ແລະ ວຽກງານຕິດຕາມຄວາມຄືບໜ້າຂອງຄໍາສັ່ງເລກທີ 02/ນຍ ເພື່ອແລກປ່ຽນຂໍ້ມູນ ແລະ ເຮັດວຽກຮ່ວມກັນຫຼາຍຂຶ້ນຕື່ມ.

- ໃນຂະບວນການປຶກສາຫາລືໃນຄັ້ງນີ້ ພວກເຮົາກໍ່ໄດ້ເປີດໂອກາດໃຫ້ນັກລົງທຶນຕ່າງປະເທດເຂົ້າມາມີສ່ວນຮ່ວມຫຼາຍຂຶ້ນ ໂດຍມີ ສະພາການຄ້າອົດສະຕາລີ ປະຈໍາລາວ ມາເຮັດວຽກຢ່າງໃກ້ຊິດຮ່ວມກັບພວກເຮົາໃນການນໍາພາການປຶກສາຫາລືຂອງຜູ້ປະກອບການໃນຂະແໜງການບໍລິການທາງດ້ານການເງິນ.

ສໍາລັບຄວາມຄືບໜ້າຂອງບັນຫາບູລິມະສິດ ທີ່ຜູ້ປະກອບການ ໄດ້ສະເໜີຜ່ານກົນໄກ LBF 12 ແລະ ໃນກົນໄກ LBF 13 ມີຄືດັ່ງນີ້:

**I. ບັນຫາທີ່ບັນດາຜູ້ສະເໜີ ເຫັນວ່າໄດ້ຮັບການແກ້ໄຂ ຫຼື ໄດ້ຮັບຄໍາຕອບທີ່ຊັດເຈນແລ້ວ ປະກອບມີ 8 ບັນຫາຄື:**

1) ບັນຫາ ຄ່າທໍານຽມຈົດທະບຽນຫຼັກຊັບຄໍ້າປະກັນເງິນກູ້ ດ້ວຍສິດນໍາໃຊ້ທີ່ດິນ: ເຊິ່ງຜ່ານມາເປັນອັດຕາທີ່ສູງຫຼາຍ ເທົ່າກັບ 0.2% ຂອງມູນຄ່າເງິນກູ້ຢືມ. ໃນເດືອນມິຖຸນາຜ່ານມານີ້ເອງ ລັດຖະບັນຍັດ ເລກທີ 002/ປປທ ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ກໍ່ໄດ້ຖືກຮັບຮອງ ແລະ ປະກາດນໍາໃຊ້ ເພື່ອປ່ຽນແທນສະບັບເລກທີ 003/ປປທ ແລ້ວ, ແລະ ໃນນັ້ນ ຄ່າທໍານຽມຈົດທະບຽນສັນຍາຄໍ້າປະກັນດ້ວຍການເອົາສິດນໍາໃຊ້ທີ່ດິນເປັນຫຼັກ ໄດ້ຖືກຫຼຸດຈາກ 0.2% ຂອງມູນຄ່າເງິນກູ້ຢືມ ມາເປັນອັດຕາຄົງທີ່ ສູງສຸດ ບໍ່ເກີນ 200.000 ກີບຕໍ່ການຈົດທະບຽນໜຶ່ງຄັ້ງ. ການຫຼຸດຜ່ອນຄ່າທໍານຽມດັ່ງກ່າວ ເປັນການຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍໃນການເຂົ້າຫາແຫຼ່ງທຶນຂອງຜູ້ປະກອບການຢ່າງຫຼວງຫຼາຍ ໃນທົ່ວທຸກຂະແໜງການ ສະນັ້ນ ຈຶ່ງຖືວ່າ ບັນຫານີ້ໄດ້ຮັບການແກ້ໄຂ.
2) ບັນຫານະໂຍບາຍການເປີດກວ້າງດ້ານນິຕິກໍາ ໃນການໃຫ້ບໍລິການທາງດ້ານການເງິນຜ່ານເຕັກໂນໂລຊີ (FinTech): ພາກທຸລະກິດໄດ້ສະເໜີ ໃຫ້ມີນິຕິກໍາທີ່ຊັດເຈນຈາກ ທະນາຄານແຫ່ງ ສປປລາວ ໃນ ການເປີດກວ້າງການອະນຸຍາດໃຫ້ມີຜູ້ໃຫ້ການບໍລິການຊໍາລະຫລາຍຂຶ້ນ ເພື່ອ

ສົ່ງເສີມການເຂົ້າເຖິງການບໍລິການດ້ານການເງິນຂອງ ພົນລະເມືອງລາວ ທຸກຄົນ ເຊິ່ງທະນາຄານ ແຫ່ງ ສປປ ລາວ ກໍ່ໄດ້ ອອກ ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020 ເພື່ອເປັນບ່ອນອີງ ແລະ ສ້າງຂໍ້ສະດວກໃຫ້ແກ່ຜູ້ທີ່ຕ້ອງການດໍາເນີນທຸລະກິດໃຫ້ບໍລິການຊໍາລະສະສາງຜ່ານທາງອີເລັກໂຕນິກ. ສະນັ້ນ ບັນຫານີ້ ກໍ່ຖືວ່າໄດ້ຮັບການແກ້ໄຂ

3) ບັນຫາ ຂັ້ນຕອນການອະນຸຍາດແຜນນໍາເຂົ້າສິນຄ້າ ແລະ ວັດຖຸດິບ ທີ່ໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມພາຍໃຕ້ກົດໝາຍສົ່ງເສີມການລົງທຶນ ພາກທຸລະກິດໄດ້ສະເໜີໃຫ້ປັບປຸງຂັ້ນຕອນການຜ່ານແຜນ ໃຫ້ສະດວກວ່ອງໄວຂຶ້ນ. ປະຈຸບັນ ອີງຕາມການລາຍງານຂອງຫຼາຍຂະແໜງການທຸລະກິດ ເຫັນວ່າ ການອະນຸຍາດແຜນນໍາເຂົ້າສິນຄ້າ ແລະ ວັດຖຸດິບ ທີ່ໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມພາຍໃຕ້ກົດໝາຍສົ່ງເສີມການລົງທຶນຖືວ່າໄດ້ຮັບການປັບປຸງໃຫ້ມີຄວາມສະດວກ ແລະ ວ່ອງໄວຂຶ້ນຫຼາຍແລ້ວ ແລະ ການຫັກລົບແຜນຢູ່ດ່ານດ້ວຍລະບົບອີເລັກໂຕນິກກໍ່ຖືວ່າສະດວກຂຶ້ນຫຼາຍ. ສະນັ້ນ ບັນຫານີ້ກໍ່ຖືວ່າໄດ້ຮັບການແກ້ໄຂ.

4) ບັນຫາ ອັດຕາຄ່າໄຟຟ້າ ຂອງຂະແໜງກະສິກໍາ: ພາກທຸລະກິດສະເໜີໃຫ້ມີການສົ່ງເສີມຂະແໜງກະສິກໍາ ໂດຍການປັບອັດຕາຄ່າໄຟຟ້າຂອງຂະແໜງກະສິກໍາ ໃຫ້ຫຼຸດລົງ ເນື່ອງຈາກເປັນຂະແໜງທີ່ມີຄວາມສໍາຄັນ ກວມເອົາການຈ້າງງານສ່ວນໃຫຍ່ຂອງແຮງງານໃນປະເທດ, ທັງຍັງເປັນຂະແໜງ ຍຸດທະສາດໃນການຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ເຊິ່ງຂະແໜງການກ່ຽວຂ້ອງ ກໍ່ໄດ້ມີການປັບໂຄງສ້າງລາຄາໄຟຟ້າໃໝ່ ເລີ່ມແຕ່ເດືອນ ພຶດສະພາ 2020 ເຖິງ ທັນວາ 2025 ເຊິ່ງ ໄດ້ມີການຫຼຸດລາຄາຄ່າໄຟ ໃຫ້ແກ່ລູກຄ້າບາງປະເພດ ກວມເອົາ ຜູ້ຜະລິດກະສິກໍາເຂົ້ານໍາ. ສະນັ້ນກໍ່ຖືວ່າບັນຫານີ້ໄດ້ຮັບການແກ້ໄຂ

5) ບັນຫາ ຂັ້ນຕອນການອະນຸມັດເອກະສານເພື່ອຊໍາລະພາສີຢູ່ສາງສິນຄ້າ: ຜູ້ປະກອບການໄດ້ສະເໜີວ່າ ຂັ້ນຕອນດັ່ງກ່າວຍັງບໍ່ຊັດເຈນ ຈຶ່ງເຮັດໃຫ້ການນໍາສິນຄ້າອອກຈາກສາງສິນຄ້າ ມີຄວາມຊັກຊ້າ. ໃນກອງປະຊຸມຂັ້ນວິຊາການ ຕໍ່ບັນຫາການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ໃນກອງປະຊຸມຂອງກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ ກໍ່ໄດ້ຍົກບັນຫານີ້ຂຶ້ນມາປຶກສາຫາລື ເຊິ່ງກະຊວງການເງິນ ໄດ້ມີການອະທິບາຍເງື່ອນໄຂທີ່ຕິດພັນກັບການຄິດໄລ່ມູນຄ່າພາສີໃຫ້ກັບຜູ້ປະກອບການທີ່ປະສົບບັນຫາ ເຊິ່ງກຸ່ມຜູ້ປະກອບການທີ່

ໄດ້ປະສົບບັນຫາດັ່ງກ່າວ ເຫັນວ່າໄດ້ຮັບຄຳຕອບທີ່ຊັດເຈນແລ້ວ ສະນັ້ນບັນຫານີ້ ຈະບໍ່ໄດ້ມີການຍົກຂຶ້ນມາປຶກສາຫາລື ໃນກອງປະຊຸມທຸລະກິດລາວຄັ້ງຕໍ່ໄປ, ແຕ່ ສຄອຊ ຈະສືບຕໍ່ຮ່ວມກັບກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອຕິດຕາມຕື່ມກັບບັນດາຜູ້ປະກອບການ. ຖ້າເຫັນວ່າຍັງມີຂໍ້ຄົງຄ້າງ ຈິ່ງຈະໄດ້ລາຍງານຫາຂະແໜງການກ່ຽວຂ້ອງ ເພື່ອປຶກສາຫາລືເພີ່ມເຕີມ.

6) ບັນຫາລະບຽບການຄຸ້ມຄອງດ້ານອະສັງຫາລິມມະຊັບ: ຜູ້ປະກອບການໄດ້ສະເໜີໃຫ້ໜ່ວຍງານພາກລັດທີ່ກ່ຽວຂ້ອງ ມີນິຕິກຳຊັດເຈນເພື່ອເປັນບ່ອນອີງໃນການສ້າງ ແລະ ຄຸ້ມຄອງອາຄານສູງ ໃນລັກສະນະຄອນໂດມິນຽມເພື່ອສ້າງຄວາມຊັດເຈນ ແລະ ຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ. ຕໍ່ກັບບັນຫານີ້ ໃນທ້າຍປີ 2020 ໄດ້ມີການປະກາດນຳໃຊ້ ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເຊິ່ງໃນ ມາດຕາທີ 106-108 ເຊິ່ງເປັນມາດຕາໃໝ່ ໄດ້ລະບຸ ເງື່ອນໄຂ, ເອກະສານປະກອບ ແລະ ຂັ້ນການພິຈາລະນາ ການຂຶ້ນທະບຽນທີ່ດິນປຸກສ້າງຄອນໂດມິນຽມ. ສະນັ້ນ ຜູ້ປະກອບການເຫັນວ່າ ເປັນບາດກ້າວທີ່ດີ ໃນການແກ້ໄຂບັນຫາ. ດັ່ງນັ້ນ ບັນຫານີ້ ຈະບໍ່ໄດ້ຖືກຍົກຂຶ້ນມາປຶກສາຫາລື ໃນກອງປະຊຸມທຸລະກິດລາວຄັ້ງຕໍ່ໄປ. ແຕ່ ຢ່າງໃດກໍ່ຕາມ ສຄອຊ ກໍ່ຍັງຈະໄດ້ສືບຕໍ່ຕິດຕາມ ເນື່ອງຈາກ ຍັງບໍ່ມີຄຳແນະນຳຈັດຕັ້ງປະຕິບັດກົດໝາຍ ອອກມາພ້ອມກັບກົດໝາຍສະບັບປັບປຸງເທື່ອ. ສະນັ້ນຖ້າຫາກເກີດມີຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດ, ສຄອຊ ຈະໄດ້ມີການລາຍງານຫາຂະແໜງການກ່ຽວຂ້ອງເພີ່ມເຕີມ.

7) ບັນຫາ ພາສີນຳເຂົ້າວັດຖຸອຸປະກອນເພື່ອມາຮັບໃຊ້ການຜະລິດ ມີມູນຄ່າສູງ: ຜູ້ປະກອບການໄດ້ສະເໜີໃຫ້ກະຊວງການເງິນ ພິຈາລະນາ ຫຼຸດພາສີນຳເຂົ້າຕໍ່ກັບວັດຖຸອຸປະກອນທີ່ມາຮັບໃຊ້ການຜະລິດ ຂອງຂະແໜງການ ທີ່ເຫັນວ່າຈະສາມາດເຮັດໃຫ້ເກີດຜົນປະໂຫຍດສູງສຸດ ຕໍ່ການສົ່ງອອກ ແລະ ຕໍ່ຜູ້ຊົມໃຊ້ພາຍໃນປະເທດ. ຕໍ່ກັບບັນຫານີ້ ກຸ່ມຜູ້ປະກອບການທີ່ປະສົບບັນຫາເຫັນວ່າໄດ້ຮັບຄຳຕອບແລ້ວຈາກກອງປະຊຸມຂັ້ນວິຊາການ ສະນັ້ນ ບັນຫານີ້ຈະບໍ່ໄດ້ຖືກຍົກຂຶ້ນເພື່ອປຶກສາຫາລືໃນກອງປະຊຸມທຸລະກິດລາວຄັ້ງຕໍ່ໄປ. ຢ່າງໃດກໍ່ຕາມ ສຄອຊ ຈະຮ່ວມກັບ ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອຕິດຕາມຕື່ມ ຖ້າເຫັນວ່າ ຍັງມີສິນຄ້າປະເພດໃດ ຫຼື ຂັ້ນຕອນໃດ ທີ່ຜູ້ປະກອບການເຫັນວ່າຍັງເປັນຂໍ້ຄົງຄ້າງ ກ່ຽວກັບພາສີນຳ

ເຂົ້າວັດຖຸອຸປະກອນເພື່ອມາຮັບໃຊ້ການຜະລິດ ກໍ່ອາດຈະໄດ້ຍົກບັນຫານີ້ ລາຍງານແກ່ຂະແໜງການກ່ຽວຂ້ອງເພື່ອປຶກສາຫາລືທາງອອກຮ່ວມກັນຕື່ມຕາມພາຍຫຼັງ.

8) ບັນຫາການເຂົ້າຫາຖານຂໍ້ມູນການຜະລິດກະສິກຳໃນ ສປປ ລາວ: ຜູ້ປະກອບການສະເໜີໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ຮ່ວມກັບ ກະຊວງອຸດສາຫະກຳ ແລະ ການຄ້າ ປັບປຸງຖານຂໍ້ມູນ ການຜະລິດ, ການນຳເຂົ້າ ແລະ ສົ່ງອອກ ຜົນຜະລິດກະສິກຳ ໃນ ສປປ ລາວ ໃຫ້ມີຂໍ້ມູນທີ່ສົມບູນຍິ່ງຂຶ້ນ, ພ້ອມທັງ ສາມາດເຂົ້າເຖິງໄດ້ງ່າຍ ຈະຊ່ວຍໃຫ້ການຕັດສິນໃຈລົງທຶນໃນຂະແໜງການຜະລິດກະສິກຳ ງ່າຍຂຶ້ນ. ຕໍ່ກັບບັນຫານີ້ ຕາງໜ້າກະຊວງກະສິກຳ ແລະ ປ່າໄມ້ ໄດ້ຊີ້ແຈງໃນກອງປະຊຸມ ຂັ້ນວິຊາການວ່າ ໄດ້ມີການເກັບກຳ ຂໍ້ມູນ ຢ່າງເປັນປະຈຳໃນແຕ່ລະປີ ເຊິ່ງເປັນຂໍ້ມູນທີ່ສາມາດເຜີຍແຜ່ໃຫ້ແກ່ພາຍນອກໄດ້, (ແຕ່ມີຄ່າໃຊ້ຈ່າຍ). ສະນັ້ນ ຖືວ່າບັນຫານີ້ໄດ້ຮັບຄຳຕອບແລ້ວ, ແຕ່ ປະຈຸບັນ ເນື່ອງຈາກ ຍັງບໍ່ສາມາດເອົາຂໍ້ມູນດັ່ງກ່າວລົງໃນເວບໄຊທ໌ ຂອງກະຊວງໄດ້ເທື່ອ ອາດເຮັດໃຫ້ການເຂົ້າຫາຂໍ້ມູນຍັງບໍ່ສະດວກເທົ່າທີ່ຄວນ. ສຄອຊ ຈະມີການຕິດຕາມກັບຜູ້ປະກອບການຕື່ມ ຖ້າຍັງມີຂໍ້ຄົງຄ້າງໃນການເຂົ້າຫາຂໍ້ມູນດັ່ງກ່າວ ອາດຈະມີການລາຍງານ ເພື່ອປຶກສາຫາລືວິທີແກ້ໄຂເພີ່ມເຕີມ.

**ທ່ານນາຍົກລັດຖະມົນຕີ ແລະ ບັນດາທ່ານທີ່ນັບຖື,**

ໃນ 8 ບັນຫານີ້ ພາກທຸລະກິດ ໂດຍສະເພາະແມ່ນຜູ້ປະສົບບັນຫາ ມີຄວາມພໍໃຈແລ້ວກັບການແກ້ໄຂບັນຫາ ຫຼື ກັບຄຳຕອບທີ່ໄດ້ຮັບຈາກຂະບວນການປຶກສາຫາລືໃນຮອບຂອງ LBF13 ນີ້. ແຕ່ທັງນີ້ທັງນັ້ນ ຖ້າຫາກຍັງມີຜູ້ປະກອບການທີ່ພົບພໍ້ບັນຫາທີ່ຕິດພັນກັບ 8 ບັນຫານີ້ໃນອະນາຄົດ ພວກເຮົາກໍ່ອາດຈະໄດ້ ຍົກຂຶ້ນມາເພື່ອປຶກສາຫາລືເພີ່ມເຕີມໃນຮອບຕໍ່ໆໄປ.

**ສ່ວນບັນຫາທີ່ບໍ່ມີຄວາມຄືບໜ້າ ແລະ ຈະບໍ່ສືບຕໍ່ປຶກສາຫາລື ມີ 1 ບັນຫາ ຄື:**

**ບັນຫາອັດຕາຄ່າໄຟຟ້າປະຈຸບັນທີ່ບໍ່ເປັນການສົ່ງເສີມຂະແໜງການບໍລິການ**, ເນື່ອງຈາກໃນການປຶກສາຫາລືລະດັບວິຊາການຫຼາຍຄັ້ງ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ແຈ້ງຕອບພວກເຮົາແລ້ວວ່າ ສຳລັບຂໍ້ສະເໜີທີ່ຂໍໃຫ້ອັດຕາຄ່າໄຟຟ້າຂອງຂະແໜງການບໍລິການ ເທົ່າກັບຂະແໜງອຸດສາຫະກຳ ແມ່ນບໍ່ສາມາດປະຕິບັດໄດ້ ເນື່ອງຈາກສະພາບການທາງດ້ານເສດຖະກິດໃນປະຈຸບັນ. ສະນັ້ນ ພາກທຸລະກິດເຫັນວ່າບັນຫານີ້ ບໍ່ມີທິດທາງແກ້ໄຂ ແລະ ຈະບໍ່ໄດ້ສືບຕໍ່ປຶກສາຫາລື.

**ນອກຈາກນີ້ແລ້ວ ຍັງມີບັນຫາທີ່ມີຄວາມຄືບໜ້າໃນການແກ້ໄຂ ແລະ ບັນຫາທີ່ຈະສືບຕໍ່ປຶກສາຫາລື ມີທັງໝົດ 31 ບັນຫາ ເຊິ່ງໄດ້ແຍກອອກເປັນ 7 ກຸ່ມບັນຫາ ຄື:**

1. ກຸ່ມບັນຫາທີ່ຕິດພັນກັບການເລີ່ມຕົ້ນທຸລະກິດ
2. ກຸ່ມບັນຫາທີ່ຕິດພັນກັບການອຳນວຍຄວາມສະດວກທາງດ້ານການຄ້າ
3. ກຸ່ມບັນຫາທີ່ຕິດພັນກັບການເຂົ້າເຖິງແຫຼ່ງທຶນ
4. ກຸ່ມບັນຫາທີ່ຕິດພັນກັບການການຈັດຕັ້ງປະຕິບັດກົດລະບຽບສະເພາະ
5. ກຸ່ມບັນຫາສະເພາະຂອງຂະແໜງການບໍລິການດ້ານການເງິນ
6. ກຸ່ມບັນຫາສະເພາະຂອງຂະແໜງການທ່ອງທ່ຽວ
7. ກຸ່ມບັນຫາສະເພາະຂອງຂະແໜງກະສິກຳ

ເຊິ່ງ ລາຍລະອຽດຂອງບັນດາບັນຫາ ແລະ ຂໍ້ສະເໜີວິທີແກ້ໄຂບັນຫາໂດຍພາກທຸລະກິດ ພາຍໃຕ້ກຸ່ມບັນຫາເຫຼົ່ານີ້ ແມ່ນສາມາດເບິ່ງເພີ່ມເຕີມໄດ້ໃນ ເອກະສານທີ່ໄດ້ແຈກຢາຍໃຫ້ກັບບັນດາທ່ານ ຫຼື ສາມາດ ດາວໂຫຼດໄດ້ທັງພາສາລາວ ແລະ ພາສາອັງກິດ ຜ່ານທາງ QR code ຫຼື ທາງເວັບໄຊທ໌ ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.

**ບັນດາທ່ານທີ່ນັບຖື,**

ໃນກອງປະຊຸມທຸລະກິດລາວຄັ້ງທີ 13 ໃນມື້ນີ້ ຜູ້ຕາງໜ້າໜ່ວຍງານປຶກສາຫາລືພາກທຸລະກິດ 3 ທ່ານ ຈະໄດ້ຍົກເອົາບາງບັນຫາທີ່ພວກເຮົາໄດ້ຄັດຈ້ອນຈາກຫຼາຍບັນຫາ ເຊິ່ງເຫັນວ່າເປັນບັນຫາທີ່ກະທົບກັບຫຼາຍຂະແໜງການ ແລະ ອາດລວມເອົາບາງບັນຫາຍ່ອຍທີ່ສະເໜີໃໝ່ທີ່ຍັງບໍ່ທັນໄດ້ຖືກຍົກຂຶ້ນມາປຶກສາຫາລືໃນລະດັບວິຊາການ ແຕ່ເປັນບັນຫາຮີບດ່ວນໃນໄລຍະ ໂຄວິດ 19 ນີ້ ມາປຶກສາຫາລືໃນມື້ນີ້ ເພື່ອສະເໜີຂໍທິດຊີ້ນຳໃນການແກ້ໄຂ ໃນວາລະຕໍ່ໄປ ເຊິ່ງ ປະກອບດ້ວຍ:

1. ກຸ່ມບັນຫາທີ່ຕິດພັນກັບການເລີ່ມຕົ້ນທຸລະກິດ ແລະ ນະໂຍບາຍສົ່ງເສີມການລົງທຶນ
2. ກຸ່ມບັນຫາທີ່ຕິດພັນກັບການອຳນວຍຄວາມສະດວກທາງດ້ານການຄ້າ ແລະ
3. ບັນຫາທີ່ຕິດພັນ ກັບຕະຫຼາດແລກປ່ຽນເງິນຕາຄູ່ຂະໜານ ແລະ ການຈັດຕັ້ງປະຕິບັດກົດ ລະບຽບດ້ານເງິນຕາ

ສ່ວນບັນຫາອື່ນໆ ທີ່ບໍ່ໄດ້ຍົກຂຶ້ນມາປຶກສາຫາລືໃນວາລະຕໍ່ໄປ ແມ່ນ ພວກເຮົາກໍ່ຍັງຈະມີການສືບຕໍ່ປຶກສາຫາລືຕາມຂະບວນການຂອງກອງປະຊຸມທຸລະກິດລາວ ຫຼັງກອງປະຊຸມໃນມື້ນີ້.

ພ້ອມດຽວກັນນີ້ ບັນດາທ່ານກໍ່ຍັງຈະໄດ້ຮັບຟັງການລາຍງານຂອງ ການຈັດຕັ້ງປະຕິບັດ ກົນໄກການປຶກສາຫາລື ລະຫວ່າງພາກລັດ ແລະ ພາກທຸລະກິດ ຂັ້ນແຂວງ, ເຊິ່ງປະຈຸບັນຖືກຈັດຕັ້ງປະຕິບັດຢູ່ ແຂວງຜົ້ງສາລີ, ອຸດົມໄຊ, ຫຼວງນ້ຳທາ ແລະ ຈຳປາສັກ ໂດຍການສະໜັບສະໜູນຂອງໂຄງການ

ECL ແລະ LBE, ເຊິ່ງໃນກອງປະຊຸມຄັ້ງນີ້ ຈະຕາງໜ້າລາຍງານໂດຍ ທ່ານປະທານສະພາການຄ້າ ແລະ ອຸດສາຫະກໍາ ແຂວງອຸດົມໄຊ ໃນວາລະຕໍ່ໄປ.

**ບັນດາທ່ານທີ່ນັບຖື** ພວກເຮົາຫວັງຢ່າງຍິ່ງວ່າ ຂະບວນການປຶກສາຫາລື ພາຍໃຕ້ກອບຂອງກອງປະຊຸມທຸລະກິດລາວ ຈະຊ່ວຍເຮັດໃຫ້ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍທີ່ຜູ້ປະກອບການພົບພໍ້ ໄດ້ຖືກຮັບຮູ້, ພິຈາລະນາ ແລະ ຕິດຕາມແກ້ໄຂຢ່າງມີປະສິດທິຜົນ ເຊິ່ງກອງເລຂາຂອງພວກເຮົາ ກໍ່ມີຄວາມພະຍາຍາມປັບປຸງກົນໄກນີ້ໃຫ້ດີຂຶ້ນເທື່ອລະກ້າວ ເປັນແຕ່ລະໄລຍະ ເພື່ອໃຫ້ທຸກພາກສ່ວນ ສາມາດເຂົ້າເຖິງຂະບວນການດັ່ງກ່າວນີ້ຫຼາຍຂຶ້ນ. ສະນັ້ນ ການປະກອບສ່ວນຂໍ້ຄິດເຫັນຂອງທ່ານ ໃນການປັບປຸງຈະເປັນປະໂຫຍດຢ່າງຍິ່ງໃນການພັດທະນາຂະບວນການນີ້ໃຫ້ດີຍິ່ງຂຶ້ນ. ຂ້າພະເຈົ້າຂໍຖືໂອກາດນີ້ ເຊີນຊວນບັນດາທ່ານຕອບແບບສອບຖາມ ຫຼັງກອງປະຊຸມໃນມື້ນີ້ ຕາມ link ທີ່ທີມງານຂອງພວກເຮົາຈະໄດ້ສົ່ງໃຫ້ ທັງຢູ່ໃນກອງປະຊຸມ ແລະ ຢູ່ໃນຮູບແບບ ອອນລາຍ ດ້ວຍ.

ສຸດທ້າຍນີ້ ຂ້າພະເຈົ້າ ຂໍອວຍພອນໃຫ້ກອງປະຊຸມທຸລະກິດລາວຄັ້ງທີ 13 ຈົ່ງປະສົບຜົນສໍາເລັດ ແລະໄດ້ຮັບໝາກຜົນສູງສຸດ.

ຂໍຂອບໃຈ.